# ໃນຖານະເປັນບຸກຄົນກຳລັງຮັບເອົາການບໍລິການສຸຂະພາບໂຣກຈິດຂອງສາທາລະນະ, ສິດທິຂອງຂ້ອຍແມ່ນຫຍັງແດ່?

## ທ່ານສາມາດໃຊ້ສິດທິຕໍ່ລົງໄປນີ້:

- ຖືກເຮັດນຳດ້ວຍຄວາມນັບຖື ແລະ ຄວາມໃຫ້ກຽດ
- ທີ່ຈະມີສິດສ່ວນຕົວຂອງທ່ານຖືກປົກປ້ອງ
- ທີ່ຈະຊ່ວຍອອກແບບແຜນການປິ່ນປົວ ແລະ ການບໍລິການຊຶ່ງຈະຕອບສະນອງຄວາມຕ້ອງການຂອງທ່ານ
- ທີ່ຈະເຂົ້າຮ່ວມໃນການຕັດສິນໃຈກ່ຽວກັບການປິ່ນປົວສຸຂະພາບໂຣກຈິດຂອງທ່ານ
- ທີ່ຈະຮັບເອົາການບໍລິການຢູ່ໃນສະຖານທີ່ຊຶ່ງປາສຈາກສິ່ງກີດກັ້ນ (ເຂົ້າເຖິງທາງໃນໄດ້)
- ທີ່ຈະຂໍເອົາລາຍລະອຽດກ່ຽວກັບຊື່, ສະຖານທີ່, ເລກໂທຣະສັບ, ແລະ ພາສາສຳລັບອົງການທ້ອງຖິ່ນ
- ສິດທິຈະໄດ້ຮັບຈຳນວນ ແລະ ຣະຍະເວລາຂອງການບໍລິການທີ່ທ່ານຕ້ອງການ
- ທີ່ຈະຂໍເອົາລາຍລະອຽດກ່ຽວກັບໂຄງຮ່າງ ແລະ ການດຳເນີນງານຂອງ RSN
- ສິດທິໃນການປິ່ນປົວພາຍໃນ 2 ຊົ່ວໂມງຂອງການປິ່ນປົວສຸກເສີນ ແລະ 24 ຊົ່ວໂມງສຳລັບການປິ່ນປົວຮີບດ່ວນ
- ທີ່ຈະມີສິດອິສຣະພາບຈາກການແບ່ງແຍກອອກໄປ ຫລື ສິ່ງປັບປັ້ງ
- ທີ່ຈະໄດ້ຮັບການບໍລິການເໝາະສົມຕາມອາຍຸ ແລະ ວັທນະທັມ
- ທີ່ຈະໄດ້ຮັບນາຍພາສາທີ່ຖືກຮັບປະກັນ ແລະ ເອກສານແປພາສາແລ້ວໂດຍບໍ່ຄິດຄ່າຈາກທ່ານ
- ທີ່ຈະເຂົ້າໃຈໃນຫົນທາງ ແລະ ທາງເລືອກຂອງການປິ່ນປົວທີ່ມີຢູ່
- ທີ່ຈະປະຕິເສດການປິ່ນປົວທີ່ຖືກວາງອອກແນວໃດແນວນຶ່ງ
- ທີ່ຈະຮັບເອົາການປິ່ນປົວຊຶ່ງບໍ່ໄດ້ແບ່ງແຍກອິນຊັ້ນວັນນະຕໍ່ທ່ານ (ເຊັ່ນວ່າອາຍຸ, ການປິ່ນປົວ, ຊະນິດຂອງການເຈັບປ່ວຍ)
- ທີ່ຈະມີອິສຣະພາບຈາກການສະແວງຫາຜົນປະໂຍດ ຫລື ການລ່ວງລ້ຳທາງເພດ
- ທີ່ຈະຮັບເອົາການອະທິບາຍກ່ຽວກັບຢາທີ່ຖືກສັ່ງຊື້ທຸກໆຢ່າງ ແລະ ຜົນສະທ້ອນທີ່ອາດຈະເປັນໄປໄດ້
- ທີ່ຈະເຮັດຄຳຊີ້ນຳແນວທາງລ່ວງໜ້າ, ຊຶ່ງຈະບອກທາງເລືອກ ແລະ ຄວາມຊອບໃຈຂອງທ່ານສຳລັບການປິ່ນປົວສຸຂະພາບໂຣກຈິດ
- ທີ່ຈະຮັບເອົາການບໍລິການທີ່ມີຄຸນນະພາບຊຶ່ງຈຳເປັນຕ້ອງໄດ້ປິ່ນປົວ
- ທີ່ຈະມີທັສນະທີສອງຈາກຜູ້ຊ່ຽວຊານສຸຂະພາບໂຣກຈິດ
- ທີ່ຈະຍື່ນຄຳຮ້ອງທຸກນຳອົງການ ຫລື RSN ຂອງທ່ານ
- ທີ່ຈະຍື່ນຄຳອຸທອນ PIHP ອີງຕາມໃບແຈ້ງການກະທຳ PIHP
- ທີ່ຈະເລືອກເອົາທ່ານໝໍປິ່ນປົວສຸຂະພາບໂຣກຈິດ ຫລື ເລືອກເອົາຄົນນຶ່ງໃຫ້ລູກຂອງທ່ານຜູ້ທີ່ມີອາຍຸຕ່ຳກວ່າ ສິບສາມ ປີ
- ທີ່ຈະປ່ຽນທ່ານໝໍປິ່ນປົວສຸຂະພາບໂຣກຈິດໃນຣະຫວ່າງ 30 ວັນທຳອິດ, ແລະ ບາງເທື່ອຫລາຍກວ່ານັ້ນ
- ທີ່ຈະຍື່ນຄຳຮ້ອງຂໍເອົາການຟັງເຣື່ອງ (Fair Hearing) ຂອງອຳນາດການປົກຄອງ
- ທີ່ຈະຂໍເອົາ ແລະ ຮັບເອົາໂກປີ້ຂອງບັນທຶກພະຍາບານຂອງທ່ານ ແລະ ຂໍເອົາການປ່ຽນແປງ
- ປາສຈາກການແກ້ແຄ້ນ